ກະຊວງແຮງງານ ແລະສະຫວັດດີການສັງຄົມ

ເລກທີ 290

ວັນທີ 13/2/96

FAX OUT

02 NOV 2011

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 49 /ນຍ

### ດຳລັດ
### ຂອງ ນາຍົກລັດຖະມົນຕີ
### ວ່າດ້ວຍການແຕ່ງຕັ້ງ ຄະນະກຳມະການປະຈຳ
### ຝ່າຍລັດຖະບານຂອງ ກອງທຶນພິເສດ ເພື່ອການເກັບກູ້ລະເບີດ
### ບໍ່ທັນແຕກ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

---------------

- ອີງໃສ່ ລັດຖະທຳມະນູນ ແຫ່ງ ສ.ປ.ປ.ລາວ
- ອີງໃສ່ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບ ເລກທີ່ 396/ຫສນຍ, ລົງວັນທີ່ 7 ເມສາ 1995 ທີ່ເຫັນດີໃຫ້ຕັ້ງກອງທຶນພິເສດ ເພື່ອການເກັບກູ້ລະເບີດທີ່ບໍ່ທັນແຕກ ຢູ່ລາວ .
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກະຊວງການຕ່າງປະເທດ .
- ເພື່ອຮັບປະກັນໃຫ້ການຄຸ້ມຄອງ ແລະ ນຳໃຊ້ກອງທຶນພິເສດ ໃຫ້ຖືກຕ້ອງຕາມເປົ້າໝາຍຢ່າງມີປະສິດທິຜົນ .

ນາຍົກລັດຖະມົນຕີ ອອກ ດຳລັດ :

<u>ມາດຕາ 1</u> : ແຕ່ງຕັ້ງ ຄະນະກຳມະການປະຈຳຝ່າຍລັດຖະບານຂອງ ກອງທຶນພິເສດ ເພື່ອເກັບກູ້ລະເບີດທີ່ບໍ່ທັນແຕກ ຢູ່ລາວ ຊຶ່ງປະກອບດ້ວຍ :

1. ທ່ານ ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນປະທານ
2. ທ່ານ ຜູ້ຕາງໜ້າ ກະຊວງການຕ່າງປະເທດ ເປັນຮອງ
3. ທ່ານ ຜູ້ຕາງໜ້າ ກະຊວງ ປ້ອງກັນຊາດ ເປັນກຳມະການ
4. ທ່ານ ຜູ້ຕາງໜ້າ ອຳນາດການປົກຄອງທ້ອງຖິ່ນບ່ອນກ່ຽວຂ້ອງ ເປັນກຳມະການ
5. ທ່ານ ຫົວໜ້າໜ່ວຍຄຸ້ມຄອງ ໂຄງການກອງທຶນພິເສດ ເພື່ອການເກັບກູ້ລະເບີດທີ່ບໍ່ທັນແຕກ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການທັງເປັນເລຂານຸການ .

<u>ມາດຕາ 2</u> : ຄະນະກຳມະການປະຈຳ ເຄື່ອນໄຫວພາຍໃຕ້ການຊີ້ນຳລວມຂອງ ທ່ານ ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍມີພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ດັ່ງນີ້ :

1. ສົມທົບກັບພາກສ່ວນອື່ນ ທີ່ໄດ້ບົ່ງໄວ້ໃນເອກະສານກອງທຶນພິເສດ ເພື່ອການເກັບກູ້ລະເບີດທີ່ບໍ່ທັນແຕກ ຢູ່ລາວ .
2. ຄົ້ນຄວ້າ ສ້າງແຜນການລະດັບຊາດ ສະເໜີລັດຖະບານກ່ຽວກັບການນຳໃຊ້ກອງທຶນພິເສດດັ່ງກ່າວ ເຂົ້າໃນວຽກງານການເກັບກູ້ລະເບີດ ແລະ ການພັດທະນາເຂດທີ່ເກັບກູ້ລະເບີດອອກແລ້ວ .
3. ອົບຂວາຍການສະໜັບສະໜູນ ທາງດ້ານທຶນຮອນເຂົ້າໃສ່ກອງທຶນພິເສດ .
4. ຄຸ້ມຄອງການໃຊ້ຈ່າຍກອງທຶນພິເສດ ຫຼື ກອງທຶນອື່ນໆ ທີ່ພົວພັນເຖິງວຽກງານເກັບກູ້ລະເບີດທີ່ບໍ່ທັນແຕກ .
5. ຄົ້ນຄວ້າ ສະເໜີການສຳຫຼວດ, ເກັບກຳຂໍ້ມູນຕົວເລກສະຖິຕິ ກ່ຽວກັບລະເບີດທີ່ບໍ່ທັນແຕກ ທີ່ຕົກຄ້າງຢູ່ລາວ ພື້ນທີ່ ທີ່ເກັບກູ້ລະເບີດແລ້ວ ແລະ ຕົວເລກສະຖິຕິກ່ຽວກັບ ຜູ້ປະສົບເຄາະຮ້າຍຈາກລະເບີດບໍ່ທັນແຕກ .
6. ໃຫ້ຂ່າວສານ ແລະ ແລກປ່ຽນຂ່າວສານ, ໂຄສະນາເຖິງຜົນຮ້າຍຍ້ອນຫຼົງຂອງລະເບີດບໍ່ທັນແຕກຢູ່ລາວ ໃຫ້ຮູ້ຢ່າງກວ້າງຂວາງ ທັງພາຍໃນ ແລະ ຕ່າງປະເທດ .
7. ຄົ້ນຄວ້າ ພິຈາລະນາ ອະນຸມັດການປະຕິບັດໂຄງການເກັບກູ້ລະເບີດ ຢູ່ແຂວງຕ່າງໆ ບົນພື້ນຖານມີການຮັບປະກັນທາງດ້ານເຕັກນິກ ແລະ ການຈັດວາງເງິນ ເຂົ້າໃນການປະຕິບັດໂຄງການຢ່າງເໝາະສົມ .
8. ປະສານສົມທົບ, ຕິດຕາມ, ກວດກາ ຊຸກຍູ້ທຸກການເຄື່ອນໄຫວຂອງບັນດາໂຄງການທີ່ໃຊ້ເງິນຂອງກອງທຶນພິເສດ ແລະ ທຶນທີ່ພາກສ່ວນອື່ນຊອກມາໄດ້ສຳລັບວຽກງານທີ່ກ່າວເທິງນີ້ ເພື່ອຮັບປະກັນເຮັດໃຫ້ໂຄງການ ປະສົບຜົນສຳເລັດ ຢ່າງມີປະສິດທິຜົນສູງ .
9. ສະຫລຸບລາຍງານ ການປະຕິບັດວຽກງານຂອງໂຄງການກອງທຶນພິເສດ ເພື່ອການເກັບກູ້ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ລາວ ໃຫ້ຂັ້ນເທິງຊາບ ຢ່າງເປັນລາຍລັກອັກສອນ ຢ່າງປົກກະຕິ ແລະ ເປັນລະບົບ .

<u>ມາດຕາ 3</u> : ຄະນະກຳມະການປະຈຳ ເພື່ອການເກັບກູ້ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ລາວ ມີກອງເລຂານຸການ ຊຶ່ງແມ່ນການຈັດຕັ້ງອັນດຽວກັບໜ່ວຍຄຸ້ມຄອງໂຄງການກອງທຶນພິເສດ ເປັນຜູ້ຊ່ວຍວຽກ ໂດຍມີຫ້ອງການຢູ່ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ . ສ່ວນໜ້າທີ່ ແລະ ພາລະບົດບາດຂອງກອງເລຂານຸການ ພ້ອມທັງການປະກອບ, ສັບຊ້ອນພະນັກງານລາວ ເຂົ້າໃນໜ່ວຍງານນີ້ ແມ່ນມອບໝາຍໃຫ້ ຄະນະກຳມະການປະຈຳຄົ້ນຄວ້າກຳນົດອອກ ແລະ ຂໍອະນຸມັດຈາກ ລັດຖະມົນຕີ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ .

ມາດຕາ 4 : ໃຫ້ບັນດາອົງການຈັດຕັ້ງ ທີ່ກ່ຽວຂ້ອງ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດ ດຳລັດ ສະບັບນີ້ ຢ່າງເຂັ້ມງວດ .

ມາດຕາ 5 : ດຳລັດ ສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ .

ວຽງຈັນ, ວັນທີ 13 FEB 1996

ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ.ລາວ




ຄຳໄຕ ສີພັນດອນ